**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ...໒໒໔໖......./ຫກ

ນະຄອນຫຼວງວຽງຈັນ, ວັນທີ...໒໖ ມັງກອນ...2026

# ແຈ້ງການ

**ເຖິງ: - ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.**

**- ບັນດາຫົວໜ່ວຍວິສາຫະກິດ ຫ້າງຮ້ານ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານຄ້າຂາຍຍົກ-ຍ່ອຍ, ໂຮງແຮມ, ຮ້ານອາຫານ ແລະ ຮ້ານບັນເທີງ ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ຫ້າມຈຳກັດການແຂ່ງຂັນທາງທຸລະກິດ ແລະ ພຶດຕິກຳທີ່ເປັນການສວຍໃຊ້ການຄອບຄອງຕະຫຼາດ ແລະ ຜູກຂາດຕະຫຼາດ.**

- ອີງຕາມ ກົດໝາຍ ວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015.
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025.

ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015 ແນ່ໃສ່ເຮັດໃຫ້ການຕິດຕາມກວດກາການລະເມີດການແຂ່ງຂັນທາງທຸລະກິດ ໃຫ້ມີປະສິດທິຜົນ, ຫ້ອງການກະຊວງ ອອກແຈ້ງການ ດັ່ງນີ້:

1. ບັນດາຫົວໜ່ວຍວິສາຫະກິດ ຫ້າງຮ້ານ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານຄ້າຂາຍຍົກ-ຍ່ອຍ, ໂຮງແຮມ , ຮ້ານອາຫານ ແລະ ຮ້ານບັນເທີງ ທີ່ຈຳໜ່າຍຜະລິດຕະພັນໂດຍກົງໃຫ້ກັບຜູ້ຊົມໃຊ້ສຸດທ້າຍ ໃນຂອບເຂດທົ່ວປະເທດ ໃຫ້ປະຕິບັດ ດັ່ງນີ້:

   1.1. ຫ້າມຈຳກັດການເຂົ້າເຖິງຕະຫຼາດຂອງສິນຄ້າ ແລະ ການບໍລິການ ເຊັ່ນ: ການກຳນົດລາຄາທີ່ບໍ່ເປັນທຳ; ການຈຳແນກປະຕິບັດທີ່ເປັນການກີດກັນ ຫຼື ຂັດຂວາງການເຂົ້າເຖິງຕະຫຼາດ; ການຈຳກັດປະລິມານສິນຄ້າ ແລະ ການບໍລິການໃດໜຶ່ງ; ຫຼື ອະນຸຍາດໃຫ້ສິນຄ້າ ແລະ ການບໍລິການຍີ່ຫໍ້, ໂລໂກ້ ຫຼື ເຄື່ອງໝາຍການຄ້າດຽວ ເຂົ້າມາຈຳໜ່າຍໃນຮ້ານຂອງຕົນ ບົນພື້ນຖານພັນທະຜູກພັນໃນສັນຍາ ແລະ ນອກສັນຍາ ທີ່ເປັນການຈຳກັດການແຂ່ງຂັນທາງທຸລະກິດ, ຍົກເວັ້ນ ກໍລະນີ ຮ້ານອາຫານ, ຮ້ານກິນດື່ມ, ຫຼື ຮ້ານຄ້າຂາຍຍ່ອຍທີ່ເປັນເປັນຕົວແທນຈຳໜ່າຍທາງການຄ້າທີ່ໄດ້ຮັບສິນຄ້າ ແລະ ສິດໃນການຈຳໜ່າຍສິນຄ້າ ຫຼື ບໍລິການ ໂດຍນຳໃຊ້ເຄື່ອງໝາຍການຄ້າ ແລະ ລະບົບບໍລິຫານຂອງຈາກຜູ້ມອບໃຫ້ເປັນຕົວແທນຈຳໜ່າຍທາງການຄ້າ ອີງຕາມສັນຍາຕົວແທນຈຳໜ່າຍທາງການຄ້າ.

   1.2. ຫ້າມປະຕິເສດການຂາຍສິນຄ້າ ແລະ ການບໍລິການໃຫ້ລູກຄ້າ ໂດຍການຈຳແນກປະຕິບັດ ຍີ່ຫໍ້, ໂລໂກ້ ຫຼື ເຄື່ອງໝາຍການຄ້າ ຂອງສິນຄ້າ ແລະ ການບໍລິການໃດໜຶ່ງ;

1.3. ບັນດາຫົວໜ່ວຍວິສາຫະກິດ ທີ່ມີພັນທະຜູກພັນໃນສັນຍານຳບໍລິສັດ, ຕົວແທນຈຳໜ່າຍ ຫຼື ພະນັກງານການຕະຫຼາດ ໃນການນຳສິນຄ້າຍີ່ຫໍ້, ໂລໂກ້ ຫຼື ເຄື່ອງໝາຍການຄ້າໃດໜຶ່ງ ທີ່ເປັນປະເພດ ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ເຂົ້າມາຈຳໜ່າຍພາຍໃນຮ້ານຂອງຕົນ ຕ້ອງມີສັນຍາຊື້-ຂາຍ ລົງນາມ ລະຫວ່າງຜູ້ຊື້ ແລະ ຜູ້ຂາຍ ແລະ ຕ້ອງເກັບຮັກສາໄວ້ ເພື່ອແຈ້ງໃຫ້ແກ່ເຈົ້າໜ້າທີ່ການຄ້າຊາບ ໃນເວລາລົງກວດກາ.

2. ກໍລະນີ ກວດກາພົບເຫັນພຶດຕິກຳ ທີ່ກຳນົດໄວ້ໃນຂໍ້ 1 ຂ້າງເທິງນັ້ນ, ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີໜຶ່ງ: ສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກກວດກາ ແລະ ມີເວລາສາມເດືອນ ເພື່ອແກ້ໄຂນັບແຕ່ມື້ເຊັນບັນທຶກກວດກາຄັ້ງທີ 1;
- ຄັ້ງທີສອງ: ປັບໃໝ 10.000.000 ກີບ ແລະ ສະເໜີໂຈະໃບອະນຸຍາດດຳເນີນທຸລະກິດທີ່ຕິດພັນກັບຂະແໜງການ ແລະ ມີເວລາສາມເດືອນ ເພື່ອແກ້ໄຂນັບແຕ່ມື້ເຊັນບັນທຶກກວດກາຄັ້ງທີ 2; ແລະ
- ຄັ້ງທີສາມ: ປັບໃໝ 20.000.000 ກີບ ແລະ ສະເໜີຍົກເລີກໃບອະນຸຍາດດຳເນີນທຸລະກິດ ແລະ ໃບທະບຽນວິສາຫະກິດ.

3. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແຕ່ງຕັ້ງເຈົ້າໜ້າທີ່ການຄ້າ ປະສານສົມທົບກັບ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ລົງຕິດຕາມ, ກວດກາ, ເກັບກຳຂໍ້ມູນ ບັນດາວິສາຫະກິດ ຫ້າງຮ້ານ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານຄ້າຂາຍຍົກ-ຍ່ອຍ, ສະຖານທີ່ພັກແຮມ, ຮ້ານອາຫານ ແລະ ບັນເທີງ ໃນຂອບເຂດທົ່ວປະເທດ.

4. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ກົມການຄ້າພາຍໃນ ປະຈຳເດືອນ ຢ່າງເປັນປົກກະຕິ.

5. ແຈ້ງການສະບັບນີ້ ມີຜົນສັກສິດ ພາຍຫຼັງ 90 ວັນນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການ**

ປອ. ບົວວັນ ວິລະວົງ

**ບ່ອນສົ່ງ:**

| | |
|---|---|
| 1.ກົມການຄ້າພາຍໃນ | 01 ສະບັບ; |
| 2.ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ | 01 ສະບັບ; |
| 3.ພະແນກວັດທະນະທຳ ແລະ ການທ່ອງທ່ຽວ ແຂວງ, ນະຄອນຫຼວງ | 01 ສະບັບ; |
| 4.ເກັບມ້ຽນ | 01 ສະບັບ. |